# ຂໍ້ມູນນີ້ ສາມາດຊ່ວຍທ່ານໄດ້ ໃນເວລາທ່ານປ່ອນບັດເລືອກຕັ້ງ

**ຈະບອກຫຍັງແດ່ຕໍ່ເຈົ້າໜ້າທີ່ຮັບຜິດຊອບການປ່ອນບັດ. ໃຫ້ບອກເຈົ້າໜ້າທີ່ທີ່ຢູ່ໂຕະນັ້ນເຖິງຊື່ເຕັມຂອງທ່ານ (ນາມສະກຸນ ແລະ ຊື່) ແລະ ທີ່ຢູ່.** ເຈົ້າໜ້າທີ່ຈະກວດເບິ່ງບັນຊີລາຍຊື່ຜູ້ມີສິດອອກສຽງເລືອກຕັ້ງ ວ່າມີຊື່ຂອງ ທ່ານ ແລະ ທ່ານສາມາດປ່ອນບັດເລືອກຕັ້ງໄດ້. ຖ້າທ່ານຕ້ອງການ ທ່ານສາມາດຂຽນລາຍລະອຽດເຫຼົ່ານີ້ໃສ່ ເຈ້ຍໃບນຶ່ງແລະເອົາໃຫ້ເຈົ້າໜ້າທີ່ຢູ່ໂຕະນັ້ນ.

## ເຈັ້ຍປ່ອນບັດ

ເຈົ້າໜ້າທີ່ຈະເອົາໃບປ່ອນບັດໃຫ້ທ່ານສອງ**(2)ໃບ. ເຈັ້ຍປ່ອນບັດໃບນ້ອຍສຳລັບ ສະພາຜູ້ແທນຣາສດອນ** (ເພື່ອ ອອກສຽງເລືອກຕັ້ງຜູ້ຕ່າງໜ້າສຳລັບເຂດຂອງທ່ານ) ແລະ **ເຈັ້ຍປ່ອນບັດໃບໃຫຍ່ສຳລັບ ວຸດທິສະພາ** (ເພື່ອ ອອກສຽງເລືອກຕັ້ງເອົາສະມາຊິກສະພາ 21ຄົນ).

**ເອົາເຈັ້ຍປ່ອນບັດໄປຂຽນຢູ່ໃນຕູ້ປ່ອນບັດທີ່ທ່ານສາມາດຂຽນເຈັ້ຍປ່ອນບັດຂອງທ່ານໄດ້ຢ່າງມີຄວາມເປັນສ່ວນຕົວ.**

## ການອອກສຽງເລືອກຕັ້ງສຳລັບຜູ້ແທນຣາສດອນ (ເຈັ້ຍປ່ອນບັດນ້ອຍ)

ໝາຍເຈັ້ຍປ່ອນບັດດ້ວຍການໃສ່ເລກ "1" ຢູ່ບ່ອນປ່ອງສີ່ຫຼ່ຽມກົງກັນຂ້າມກັບຊື່ຂອງຜູ້ສມັກທີ່ທ່ານປະສົງເລືອກ ເອົາເປັນຜູ້ທີ່ທ່ານມັກທີ່ສຸດ. ຖ້າທ່ານປະສົງເລືອກເອົາຜູ້ສມັກຄົນອື່ນໆຕື່ມອີກ ທ່ານກໍສາມາດໝາຍເລກຕໍ່ໆໄປ ໂດຍເລີ້ມຈາກເລກ "2" ໃສ່ປ່ອງສີ່ຫຼ່ຽມກົງກັນຂ້າມກັບຊື່ຂອງຜູ້ສມັກຕາມລຳດັບທີ່ທ່ານມັກ.

## ການອອກສຽງເລືອກຕັ້ງສຳລັບວຸດທິສະພາ (ເຈັ້ຍປ່ອນບັດໃຫຍ່)

ເວລາເລືອກຕັ້ງເອົາວຸດທິສະພາ ທ່ານສາມາດເລືອກເອົາຂ້າງເທິງ ຫຼື ຂ້າງລຸ່ມຂອງເສັ້ນໝາສີດຳທີ່ຢູ່ເທິງເຈັ້ຍ ປ່ອນບັດ.

### ການເລືອກແບບຢູ່ຂ້າງເທິງຂອງເສັ້ນໝາສີດຳ

ທ່ານສມາດເລືອກຢູ່ຂ້າງເທິງເສັ້ນໝາສີດຳໂດຍໝາຍເລກ "1" ໃສ່ຢູ່ໃນປ່ອງສີ່ຫຼ່ຽມຢູ່ເທິງກຸ່ມຂອງພວກລົງຊື່ ສມັກທີ່ທ່ານມັກທີ່ສຸດ. ຖ້າທ່ານຕ້ອງການ ທ່ານສາມາດເລືອກເອົາກຸ່ມອື່ນໆຕື່ມດ້ວຍການໝາຍເລກຕໍ່ໆໄປ ເລີ້ມ ຈາກເລກ "2" ໃສ່ໃນປ່ອງສີ່ຫຼ່ຽມຢູ່ເທິງກຸ່ມຂອງຜູ້ສມັກຕາມລຳດັບທີ່ທ່ານມັກ.

### ການເລືອກແບບຢູ່ຂ້າງລຸ່ມຂອງເສັ້ນໝາສີດຳ

ທ່ານສາມາດເລືອກຢູ່ຂ້າງລຸ່ມຂອງເສັ້ນໝາສີດຳດ້ວຍການໝາຍເລກ "1", "2", "3", "4", "5", "6", "7", "8", "9","ໝ "10", "11", "12", "13", "14" ແລະ "15" ໃສ່ໃນປ່ອງສີ່ຫຼ່ຽມກົງກັນຂ້າມ ກັບຊື່ຂອງ15ຄົນຕາມລຳດັບທີ່ທ່ານມັກ. ຖ້າທ່ານຕ້ອງການ ທ່ານສາມາດເລືອກເອົາຜູ້ສມັກອື່ນໆຕື່ມດ້ວຍການ ໝາຍເລກຕໍ່ໆໄປໂດບເລີ້ມຕົ້ນຈາກເລກ "16" ໃສ່ໃນປ່ອງສີ່ຫຼ່ຽມກົງກັນຂ້າມກັບຊື່ຂອງຜູ້ສມັກຕາມລຳດັບທີ່ ທ່ານມັກ.

## ຕູ້ຂຽນເຈັ້ຍປ່ອນບັດ

ເມື່ອທ່ານຂຽນເຈັ້ຍປ່ອນບັດແລ້ວໆ ຈົ່ງພັບເຈັ້ຍໄວ້ເພື່ອວ່າບໍ່ມີໃຜເຫັນການເລືອກນັ້ນ ແລະ **ເອົາເຈັ້ຍປ່ອນບັດ ນັ້ນໃສ່ເຂົ້າໄປໃນຫີບຕ່າງໆກ່ອນທີ່ທ່ານຈະອອກຈາກບ່ອນປ່ອນບັດ.**

## ຂໍ້ສຳຄັນ

ຈົ່ງພັບເຈັ້ຍປ່ອນບັດເພື່ອບໍ່ໃຫ້ຄົນອື່ນເຫັນ ເອົາເຈັ້ຍປ່ອນບັດທີ່ພັບໄວ້ແລ້ວນັ້ນໄປໃຫ້ເຈົ້າໜ້າທີ່ຮັບຜິດຊອບ ການເລືອກຕັ້ງເບິ່ງ ແລະ ເອົາໃສ່ລົງໄປໃນຫີບປ່ອນບັດອັນຖືກຕ້ອງ.

LAO

### ການປ່ອນບັດນອກເຂດບ່ອນຢູ່

**ຖ້າທ່ານບໍ່ໄດ້ຢູ່ໃນເຂດປ່ອນບັດຂອງທ່ານໃນມື້ເລືອກຕັ້ງ ທ່ານກໍຍັງສາມາດປ່ອນບັດໄດ້.** ສິ່ງທີ່ທ່ານຕ້ອງເຮັດ ກໍຄືພຽງແຕ່ໄປຫາໂຕະທີ່ມີປ້າຍຂຽນວ່າ '**ABSENT**' ແລະບອກເຈົ້າໜ້າທີ່ວ່າທ່ານຢູ່ໃສ ແລ້ວເຈົ້າໜ້າທີ່ກໍຈະ ຖາມເອົາລາຍລະອຽດຂອງຊື່ແລະທີ່ຢູ່ຂອງທ່ານ ແລ້ວເອົາໃສ່ໃນຊອງໜັງສືຊຶ່ງທ່ານຕ້ອງເຊັນຊື່. ແລ້ວເຈົ້າໜ້າ ທີ່ກໍຈະເອົາເຈັ້ຍປ່ອນບັດໃຫ້ທ່ານ. ທ່ານຕ້ອງໄປໝາຍເຈັ້ຍປ່ອນບັດເຫຼົ່ານີ້ຢູ່ທີ່ຕູ້ຂຽນເຈັ້ຍປ່ອນບັດ ເມື່ອຂຽນແລ້ວ ຈຶ່ງພັບ ແລ້ວນຳໄປຄືນໃຫ້ເຈົ້າໜ້າທີ່ຮັບຜິດຊອບກ້ານເລືອກຕັ້ງ ແລ້ວພວກເຂົາກໍຈະເອົາໃສ່ໃນຊອງໜັງສື ຕິດຊອງ ແລ້ວເອົາໃສ່ຢູ່ໃນຫີບປ່ອນບັດ.

### ຊື່ທ່ານບໍ່ຢູ່ໃນບັນຊີຜູ້ປ່ອນບັດ

ຖ້າຊື່ຂອງທ່ານບໍ່ຢູ່ໃນບັນຊີປ່ອນບັດ ຫຼື ຖືກຂີດຂ້າອອກວ່າໄດ້ປ່ອນບັດແລ້ວຍ້ອນຄວາມຜິດພາດຂອງເຈົ້າໜ້າທີ່ຮັບຜິດຊອບການເລືອກຕັ້ງ ທ່ານກໍຍັງມີ ສິດປ່ອນບັດໄດ້ ແລະ ທ່ານສາມາດຂໍປ່ອນແບບ Section Vote. ເຈົ້າໜ້າທີ່ຈະເອົາຊອງໜັງສືອັນນຶ່ງ ໃຫ້ທ່ານ ຊຶ່ງໃນນັ້ນມີໃບແຈ້ງທີ່ເຈົ້າໜ້າທີ່ຈະຂຽນຕື່ມໃຫ້ທ່ານ ແລ້ວໃຫ້ທ່ານເຊັນຊື່. ເຈົ້າໜ້າທີ່ຈະເປັນພະຍານການເຊັນຂອງທ່ານ ເກັບຊອງໜັງສືໄວ້ ແລະ ເອົາເຈັ້ຍປ່ອນ ບັດໃຫ້ທ່ານ. ຫລັງຈາກ ໝາຍເຈັ້ຍປ່ອນບັດຮຽບຮ້ອຍແລ້ວ ໃຫ້ເອົາເຈັ້ຍປ່ອນບັດນັ້ນມາຄືນໃຫ້ເຈົ້າໜ້າທີ່. ເຈົ້າໜ້າທີ່ຈະສອດເຈັ້ຍປ່ອນທີ່ ພັບໄວ້ແລ້ວໃສ່ໄປໃນຊອງ ຕິດຊອງ ແລ້ວປ່ອນຊອງນັ້ນລົງໃນຫີບປ່ອນບັດ.

### ປ່ອນບັດທາງລັບ

ບໍ່ມີຜູ້ໃດມີສິດຮູ້ວ່າທ່ານປ່ອນບັດແບບໃດ. ຜູ້ອອກສຽງເລືອກຕັ້ງບາງຄົນກັງວົນວ່າ ການທີ່ເອົາໃບປ່ອນບັດໃສ່ ໃນຊອງທີ່ຕົນເຊັນຊື່ໃສ່ໄວ້ນັ້ນ ອາດຈະເຮັດໃຫ້ຄົນອື່ນຮູ້ວ່າຕົນປ່ອນບັດເລືອກເອົາໃຜ.

ມີແຕ່ເຈົ້າໜ້າທີ່ນັບຄະແນນ ຫຼື ເຈົ້າໜ້າທີ່ຊຶ່ງຖືກມອບໝາຍມາຢ່າງເປັນທາງການ ແລະ ຢູ່ຊ້ອງໜ້າຜູ້ກວດກາ ເທົ່ານັ້ນ ທີ່ຈະເປັນຜູ້ເປີດຊອງເຫຼົ່ານີ້ໄດ້. ມີການແນະນຳພິເສດໃນການຄວບຄຸມເຈັ້ຍປ່ອນບັດເຫຼົ່ານີ້ ຮວມເຖິງ ການຍົກຍ້າຍອອກຈາກຊອງໜັງສື ແລະ ການເອົາໃສ່ລົງໄປໃນຫີບປ່ອນບັດໃນທັນທີ.

### ການຊ່ວຍແບບພິເສດ

ຄົນທີ່ບໍ່ສາມາດອ່ານຄຳແນະນຳຕ່າງໆ ຫຼື ຄົນເສັຍອົງຄະ ສາມາດຈັດຫາໃຫ້ໝູ່ເພື່ອນ ຫຼື ຍາດພີ່ນ້ອງຊ່ວຍ ປ່ອນບັດໄດ້. ພວກເຂົາຍັງສາມາດຂໍໃຫ້ເຈົ້າໜ້າທີ່ຮັບຜິດຊອບການເລືອກຕັ້ງຊ່ວຍເຫຼືອໄດ້ອີກເຊັ່ນກັນ.

### ຂຽນເຈັ້ຍປ່ອນບັດຜິດ

ຖ້າຫາກວ່າ ບໍ່ວ່າດ້ວຍຄວາມຜິດພາດ ຫຼື ອຸບັດຕິເຫດ ທ່ານຂຽນເຈັ້ຍປ່ອນບັດຜິດ ຢ່າຈີກ ຫຼື ແກວ່ງບັດ ນັ້ນຖິ້ມ ເອົາໄປສົ່ງຄືນໃຫ້ເຈົ້າໜ້າທີ່ຮັບຜິດຊອບການເລືອກຕັ້ງ ເພື່ອເອົາໃບໃໝ່.

LAO